Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC



# *Vocational Training & Employment Support Services (VTESS) – Lao PDR*

**The Vocational Training and Employment Support Services (VTESS) project aims at vocational training and labour market insertion of early school leavers**, who are young disadvantaged people of 15-35 years of age, have completed primary but not lower secondary education and are subjected to income poverty. The goal is to bring these early school leavers into employment, self–employment, or back into the education system. VTESS is a project of the Government of the Lao PDR and the Government of Switzerland through the Swiss Agency for Development and Cooperation. It is implemented by the Ministry of Education and Sports, the Ministry of Labour and Social Welfare and the consortium of Swisscontact and the Lucerne University of Applied Sciences and Arts. The project is working in the provinces of Oudomxay, Xayaboury, Xiengkhuang, Khammuane and Saravane. **It consists of 3 interrelated components:**

**CMP1- Integrated Vocational Education and Training (IVET):** This component seeks to deliver labour market relevant and quality training, with a focus on sustainability, and the completion of the trainees of the IVET pathway. Under this component the project: i) reviews the legal basis of the IVET path and its financing; ii) selects IVET schools in targeted provinces and builds their capacity, including its teacher body, to deliver quality training; iii) revises and /or develops curricula jointly with the private sector in order that the skills acquired by the IVET graduates match with the requirement of the world of work; iv) trains early school leavers.

**CMP2- Employment Support Services (ESS):** The employment support services component is a new approach and is conceptualized, developed and piloted during the project. The approach involves early school leavers in a coaching process over several months integrating them into employment, self–employment, or back into the education system. This component is closely linked to CMP1. Under this component the project: i) adapts the ESS concept successfully applied elsewhere to the context of Laos; ii) selects ESS partners in the targeted provinces to build their capacity and develops a coaches' pool to deliver quality ESS; iii) delivers ESS to early school leavers; iv) seeks to anchor the successfully piloted ESS on national/ subnational level.

**CMP3- IVET Framework Conditions:** This component seeks to strengthen the overall context for TVET (Technical Vocational Education and Training). In particular, the project supports selected innovative projects at sub-national level which strengthen delivery of IVET and ESS services.

| | |
|---|---|
| **Inception phase:** | Aug 2019 - March 2020 |
| **Project duration:** | (4 years) Aug 2019 - Jul 2023 |
| **Funded by:** | Swiss Agency for Development and Cooperation |
| **Implementer:** | Consortium Swisscontact / Lucerne University of Applied Sciences and Arts |



**Key implementing governmental partners:**
- Ministry of Education and Sports - MoES (Lead)
- Ministry of Labour and Social Welfare - MoLSW

**Target Groups:**
- Early school-leavers: young people (15-35 years of age) who have completed primary, but not lower secondary education, and are subjected to income poverty.
- Wider: Teachers from IVET schools, staff from job centres or similar institutions (career counsellors, job coaches, community or youth workers, village facilitators, social workers)

Version March 2021

vtess
Vocational Training & Employment Support Services

Lucerne University of Applied Sciences and Arts
HOCHSCHULE LUZERN

swisscontact

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

# ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ - ສປປ ລາວ

ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ ***(VTESS)*** ມີເປົ້າໝາຍເລັງໃສ່ເພື່ອສະໜອງການຝຶກອົບຮົມວິຊາຊີບ ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍສຸມໃສ່ກຸ່ມເປົ້າໝາຍທີ່ເປັນໄວໜຸ່ມຜູ້ດ້ອຍໂອກາດ ທີ່ມີອາຍຸລະຫວ່າງ 15-35 ປີ, ທີ່ຮຽນຈົບຊັ້ນປະຖົມ ແຕ່ບໍ່ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ມີຄວາມທຸກຍາກ ເປົ້າໝາຍແມ່ນເພື່ອໃຫ້ເຂົາເຈົ້າມີວຽກເຮັດງານທຳ, ປະກອບອາຊີບດ້ວຍຕົນເອງ ຫຼື ກັບຄືນເຂົ້າສູ່ ລະບົບການສຶກສາ. ໂຄງການ VTESS ແມ່ນໂຄງການຮ່ວມມື ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສະວິສເຊີແລນ ໂດຍຜ່ານ ອົງການ ເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິສເຊີແລນ ***(SDC)*** ເຊິ່ງຮ່ວມກັນຈັດຕັ້ງປະຕິບັດ ໂດຍ ກະຊວງສຶກສາທິການ ແລະ ກິລາ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ຮ່ວມກັບ ອົງການ ສະວິສຄອນແທັກ ແລະ ມະຫາວິທະຍາໄລ ວິທະຍາສາດປະຍຸກ ແລະ ສິລະປະກຳສາດ ***(HSLU).*** ໂຄງການດັ່ງກ່າວ ໄດ້ດຳເນີນຢູ່ແຂວງ ອຸດົມໄຊ, ໄຊຍະບູລີ, ຊຽງຂວາງ, ຄຳມ່ວນ ແລະ ສາລະວັນ, ເຊິ່ງມີ 3 ອົງປະກອບ ທີ່ກ່ຽວພັນກັນດັ່ງນີ້:

***ອົງປະກອບທີ 1 - ການຝຶກອົບຮົມວິຊາຊີບແບບປະສົມ ແລະ ເສັ້ນທາງເຊື່ອມຕໍ່ (IVET Training and Pathway):***

ອົງປະກອບນີ້ ແນໃສ່ປັບປຸງຄຸນນະພາບການຝຶກອົບຮົມວິຊາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ, ມີຄວາມຍືນຍົງ ແລະ ສ້າງເງື່ອນໄຂອຳນວຍໃຫ້ແກ່ນັກຮຽນສາມາດສຳເລັດການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ສືບຕໍ່ໃນລະດັບທີ່ສູງຂຶ້ນ. ພາຍໃຕ້ອົງປະກອບດັ່ງກ່າວ ໂຄງການໄດ້ສຸມໃສ່: 1) ທົບທວນຄືນບັນດານິຕິກຳ ທີ່ຕິດພັນກັບວຽກງານຝຶກອົບຮົມວິຊາຊີບແບບປະສົມ ແລະ ກົນໄກການໃຫ້ທຶນ; 2) ຄັດເລືອກເອົາໂຮງຮຽນ ວິຊາຊີບແບບປະສົມຢູ່ ແຂວງເປົ້າໝາຍ ແລະ ສ້າງຂີດຄວາມສາມາດໃຫ້ແກ່ຄູອາຈານຂອງໂຮງຮຽນດັ່ງກ່າວ ໃຫ້ສາມາດສະໜອງການຝຶກອົບຮົມທີ່ມີຄຸນະພາບ; 3) ປັບປຸງ ແລະ ພັດທະນາຫຼັກສູດ ໂດຍປະສານສົມທົບກັບພາກສ່ວນຜູ້ປະກອບການ ເພື່ອຮັບປະກັນວ່າທັກສະຂອງຜູ້ໄດ້ຮັບການຝຶກອົບຮົມຈາກໂຮງຮຽນເຫຼົ່ານັ້ນ ສອດຄ່ອງກັບຄວາມຕ້ອງການຂອງໜ້າວຽກຕົວຈິງ ທີ່ຜູ້ປະກອບການຕ້ອງການ ແລະ 4) ສະໜອງ ການຝຶກອົບຮົມວິຊາຊີບໃຫ້ແກ່ກຸ່ມເປົ້າໝາຍ.

***ອົງປະກອບທີ 2 - ການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ (ESS):***

ອົງປະກອບນີ້ ແນໃສ່ໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳເຊິ່ງຖືວ່າເປັນຮູບແບບໃໝ່ທີ່ຈະຖືກອອກແບບ, ພັດທະນາ ແລະ ທົດລອງນຳໃຊ້ໃນໄລຍະຈັດຕັ້ງປະຕິບັດໂຄງການ. ກິດຈະກຳຮູບແບບໃໝ່ດັ່ງກ່າວ ຈະນຳເອົາກຸ່ມເປົ້າໝາຍ; ຜູ້ທີ່ອອກໂຮງຮຽນ ມາເຂົ້າຮ່ວມຂະບວນການແນະນຳອາຊີບ ເປັນໄລຍະເວລາຫຼາຍເດືອນ ເພື່ອຊ່ວຍໃຫ້ພວກເຂົາເຈົ້າກ້າວເຂົ້າສູ່ການມີວຽກເຮັດງານທຳ, ປະກອບອາຊີບຕົນເອງ ຫຼື ກັບຄືນສູ່ລະບົບ ການສຶກສາ. ອົງປະກອບນີ້ ແມ່ນເຊື່ອມໂຍງໂດຍກົງກັບ ອົງປະກອບທີ 1. ພາຍໃຕ້ອົງປະກອບນີ້ໂຄງການໄດ້ສຸມໃສ່: 1) ດັດປັບຮູບແບບແນວຄວາມຄິດຂອງການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ ທີ່ໄດ້ຮັບຜົນສຳເລັດຈາກບ່ອນອື່ນ ມາຜັນຂະຫຍາຍ ແລະ ປັບໃຊ້ໃຫ້ເໝາະສົມກັບສະພາບຕົວຈິງຂອງ ສປປ ລາວ; 2) ຄັດເລືອກເອົາຄູ່ຮ່ວມງານ ທີ່ເຮັດວຽກ ໃຫ້ການບໍລິການຊອກຫາວຽກເຮັດງານທຳຢູ່ ແຂວງເປົ້າໝາຍ ເພື່ອສ້າງຂີດຄວາມສາມາດຂອງເຂົາເຈົ້າໃນການໃຫ້ຄຳປຶກສາ ແລະ ແນະນຳວິຊາຊີບ ກໍຄື ສະໜັບສະໜູນການມີວຽກເຮັດງານທຳໃຫ້ມີຄຸນະພາບດີຂຶ້ນ; 3) ສະໜອງການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳໃຫ້ແກ່ກຸ່ມເປົ້າໝາຍໂດຍສະເພາະຜູ້ທີ່ອອກໂຮງຮຽນ ແລະ 4) ສະເໜີໃຫ້ນຳເອົາກິດຈະກຳທົດລອງ ແລະ ບົດຮຽນທີ່ບັນລຸຜົນສຳເລັດ ກ່ຽວກັບການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ ເພື່ອເຊື່ອມສານເຂົ້າໃນລະບົບການສຶກສາວິຊາຊີບໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

***ອົງປະກອບທີ 3 - ປັບປຸງສະພາບແວດລ້ອມເອື້ອອຳນວຍຕໍ່ວຽກງານອາຊີວະສຶກສາ (IVET Framework Conditions):***

ອົງປະກອບນີ້ ຈະເລັ່ງໃສ່ປັບປຸງ ແລະ ສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ວຽກງານອາຊີວະສຶກສາ. ໂດຍສະເພາະການຄັດເລືອກ ແລະ ໃຫ້ການສະໜັບສະໜູນ ໂຄງການ ຫຼື ກິດຈະກຳທີ່ສ້າງສັນ ທີ່ຕິດພັນກັບການພັດທະນາລະບົບວຽກງານການຝຶກອົບຮົມວິຊາຊີບ ໃນຂັ້ນທ້ອງຖິ່ນ ເຊິ່ງຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ການຝຶກອົບຮົມວິຊາຊີບແບບປະສົມ ແລະ ການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ.



**ໄລຍະເລີ່ມຕົ້ນ:** ເດືອນສິງຫາ 2019 - ມີນາ 2020

**ໄລຍະເວລາຂອງໂຄງການ:** (4 ປີ) ແຕ່ເດືອນສິງຫາ 2019 - ກໍລະກົດ 2023

**ໃຫ້ທຶນໂດຍ:** ລັດຖະບານ ສະວິສເຊີແລນ ໂດຍຜ່ານ ອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ (SDC)

**ຜູ້ຈັດຕັ້ງປະຕິບັດ:** ອົງການສະວິສຄອນແທັກ / ມະຫາວິທະຍາໄລ ວິທະຍາສາດປະຍຸກ ແລະ ສິລະປະກຳສາດ (Lucerne University)

**ຄູ່ຮ່ວມງານຫຼັກຈາກພາກລັດຖະບານ:**

- ກະຊວງສຶກສາທິການ ແລະ ກິລາ (ຄູ່ຮ່ວມງານຫຼັກ)
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

**ກຸ່ມເປົ້າໝາຍ:**

- ຜູ້ທີ່ອອກໂຮງຮຽນ: ໄວໜຸ່ມ (ອາຍຸ 15 - 35 ປີ) ຜູ້ທີ່ຈົບປະຖົມ ແຕ່ບໍ່ຈົບມັດທະຍົມສຶກສາຕອນຕົ້ນ, ມາຈາກຄອບຄົວທຸກຍາກ ຫຼື ພື້ນຖານເສດຖະກິດຝືດເຄືອງ.
- ຄູອາຈານທີ່ສັງກັດໃນສະຖານອະຊີວະສຶກສາ, ພະນັກງານຈາກຈຸດບໍລິການຈັດຫາງານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ (ຜູ້ໃຫ້ຄຳປຶກສາດ້ານວິຊາຊີບ, ຄູຝຶກການສ້າງວຽກເຮັດງານທຳ, ຊຸມຊົນ, ແຮງງານເຍົາວະຊົນ, ຜູ້ອຳນວຍຄວາມສະດວກຂັ້ນບ້ານ, ແລະ ນັກສັງຄົມສົງເຄາະ).

ສະບັບ ເດືອນມີນາ 2021

vtess
Vocational Training & Employment Support Services

Lucerne University of Applied Sciences and Arts
HOCHSCHULE LUZERN

swisscontact